# ຮຽນຮູ້ພາສາອັງກິດກັບລູກທີ່ເປັນເດັກນ້ອຍ ແລະ ລູກທີ່ເປັນໄວໜຸ່ມຂອງເຈົ້າ: ການໃຊ້ໃບສະນີຂີ້ເຫຍື້ອເພື່ອຝຶກພາສາອັງກິດ



ໂດຍ Nicole DeSalle, ຜູ້ປະສານງານການຂຽນ, Iowa Reading Research Center (ສູນວິໄຈການອ່ານແຫ່ງຣັດໄອໂອວາ)

*ໝາຍເຫດຈາກບັນນາທິການ: ການຮຽນຮູ້ຮ່ວມກັນສາມາດພັດທະນາທັກສະພາສາອັງກິດຂອງລູກທີ່ເປັນເດັກນ້ອຍ ແລະ ລູກທີ່ເປັນໄວໜຸ່ມຂອງເຈົ້າ ພ້ອມກັບທັກສະຂອງຕົວເຈົ້າເອງ. ໂພສນີ້ເປັນສ່ວນໜຶ່ງຂອງຊຸດການຮຽນຢ່າງຕໍ່ເນື່ອງທີ່ອອກແບບມາເພື່ອຊ່ວຍໃຫ້ຜູ້ໃຫ້ບໍລິການດູແລເບິ່ງທີ່ເປັນຜູ້ຮຽນຮູ້ພາສາອັງກິດໄດ້ພົບໂອກາດການຮຽນຮູ້ພາສາອັງກິດສຳລັບຄອບຄົວໃນຊີວິດປະຈຳວັນຂອງພວກເຂົາ.*

ພວກເຮົາອາໄສໃນໂລກດິຈິຕອລ. ແລ້ວອີກຢ່າງ ໃນຍຸກແຫ່ງຂໍ້ຄວາມ ແລະ ແອັບເທິງສະມາດໂຟນນີ້, ກ່ອງໃບສະນີຂອງເຈົ້າອາດຍັງເຕັມໄປດ້ວຍໃບສະນີຂີ້ເຫຍື້ອຢູ່ເລື້ອຍໆ ເຊັ່ນ: ຄູປອງ ແລະ ເຈ້ຍໂຄສະນາ. ເຖິງແມ່ນສັນຊາດຕະຍານຂອງເຈົ້າອາດເປັນການຖິ້ມເຈ້ຍເຫຼົ່ານັ້ນໃສ່ຖັງຂີ້ເຫຍື້ອໂດຍທັນທີ, ມີວິທີທີ່ຈະນຳໃຊ້ໃບສະນີຂີ້ເຫຍື້ອ ຫຼື ສິ່ງຂອງອື່ນໆໃນປະຈຳວັນ (ເຊິ່ງເອີ້ນລວມກັນວ່າ *realia (ອຸປະກອນຊ່ວຍສອນ)*) ເພື່ອສົ່ງເສີມການພັດທະນາທັກສະປາກເວົ້າພາສາອັງກິດຂອງເຈົ້າ ພ້ອມທັງທັກສະຂອງລູກທີ່ເປັນເດັກນ້ອຍ ແລະ ລູກທີ່ເປັນໄວໜຸ່ມຂອງເຈົ້າ. ພາສາເຮັດໃຫ້ພວກເຮົາສາມາດແກ້ໄຂບັນຫາ ແລະ ມີປະຕິສຳພັນກັບຄົນອື່ນໆ (Vygotsky, 1978). ສະນັ້ນ ການຝຶກຝົນກັບ realia

**(ອຸປະກອນຊ່ວຍສອນ)** ເຊັ່ນ: ຄູປອງ ແລະ ເຈ້ຍໂຄສະນາ ສາມາດເຮັດໃຫ້ເຈົ້າ ແລະ ລູກທີ່ເປັນເດັກນ້ອຍ ຫຼື ລູກທີ່ເປັນໄວໜຸ່ມຂອງເຈົ້າໄດ້ຮັບຄວາມຮູ້ດ້ານວັດທະນະທຳກ່ຽວກັບສະຫະລັດອາເມຣິກາ ເຊັ່ນ: ປະເພດຜະລິດຕະພັນທີ່ສາມາດພົບເຫັນໄດ້ໃນຮ້ານຄ້າ ແລະ ປະເພດຂໍ້ມູນທີ່ມັກພົບເຫັນໃນເຈ້ຍໂຄສະນາ (Xu, 1999).

## ການສ້າງຄວາມຮູ້ກ່ຽວກັບເບື້ອງຫຼັງຮ່ວມກັນ

ສຳລັບຜູ້ຮຽນຮູ້ພາສາອັງກິດ, ຄຳສັບເຫຼົ່ານີ້ມີປະໂຫຍດທີ່ໄດ້ຮູ້ ກ່ອນທີ່ເຈົ້າລອງເຮັດກິດຈະກຳທີ່ຢູ່ໃນໂພສນີ້.

- ມີໄປສະນີທີ່ເຈົ້າໄດ້ຮັບ ເຊິ່ງເຈົ້າກໍຕ້ອງການຮັບ ເຊັ່ນ: ຈົດໝາຍ ຫຼື ສິ່ງອື່ນໆທີ່ເຈົ້າຕ້ອງການຮັບ ເຊັ່ນ: ໃບຮຽກເກັບເງິນ. ໄປສະນີທີ່ເຈົ້າບໍ່ຕ້ອງການໄດ້ຮັບມັກຖືກເອີ້ນວ່າ *junk mail (ໄປສະນີຂີ້ເຫຍື້ອ)*. ຄູປອງ ແລະ ເຈ້ຍໂຄສະນາແມ່ນປະເພດໄປສະນີຂີ້ເຫຍື້ອ. ເຖິງແມ່ນເຈ້ຍໂຄສະນາ ແລະ ຄູປອງມີປະໂຫຍດ, ຫຼາຍຄົນຖືວ່າພວກມັນເປັນໄປສະນີຂີ້ເຫຍື້ອ ເພາະພວກເຂົາໄດ້ຮັບມັນຫຼາຍ ແລະ ຍ້ອນພວກເຂົາບໍ່ໄດ້ຂໍໃຫ້ສົ່ງມັນ. ຄຳວ່າ *spam* (ສະແປມ) ມັກຖືກໃຊ້ເພື່ອອະທິບາຍເນື້ອຫາປະເພດນີ້ທີ່ບໍ່ຕ້ອງການ ເຊິ່ງຖືກສົ່ງເຂົ້າອີເມວຂອງເຈົ້າ. ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບຫົວຂໍ້ນີ້, ໃຫ້ອ່ານ ບົດຄວາມກ່ຽວກັບ spam (ສະແປມ) ນີ້ຈາກເວບໄຊສຳລັບຜູ້ຮຽນຮູ້ພາສາອັງກິດ, *Breaking News English (ພາສາອັງກິດໃນຊ່ວງພັກຂ່າວ)*.
- *Coupon (ຄູປອງ)* ແມ່ນປີ້ ຫຼື ເຈ້ຍແຜ່ນນ້ອຍໆທີ່ໃຫ້ສ່ວນຫຼຸດແກ່ເຈົ້າ ສຳລັບຜະລິດຕະພັນ ຫຼື ການບໍລິການ. ສາມາດພົບເຫັນຄູປອງໄດ້ໃນໜັງສືພິມ ຫຼື ທາງອອນລາຍ. ຄູປອງຍັງມັກຖືກສົ່ງຜ່ານໄປສະນີ. ດ້ວຍຄູປອງ, ເຈົ້າສາມາດໄດ້ຮັບສ່ວນຫຼຸດສຳລັບທຸກປະເພດຂອງຜະລິດຕະພັນ ເຊັ່ນ: ອາຫານ, ສະບູ່ຝຸ່ນຊັກເຄື່ອງ ຫຼື ຜ້າເຈ້ຍ. ເພື່ອໃຊ້ຄູປອງ, ໃຫ້ນຳປີ້ທີ່ເປັນເຈ້ຍ (ຫຼື ປຣິນມັນອອກມາ ຖ້າມັນຢູ່ໃນຮູບແບບອອນລາຍ) ໄປທີ່ຮ້ານຄ້າພ້ອມກັບເຈົ້າ. ມອບຄູປອງໃຫ້ແກ່ພະນັກງານເກັບເງິນ ເມື່ອເຈົ້າຈ່າຍຢູ່ທີ່ເຄົາເຕີກວດເຄື່ອງອອກ.




- *Advertisement (ເຈ້ຍໂຄສະນາ)* ແມ່ນແຈ້ງການກ່ຽວກັບຜະລິດຕະພັນ, ການບໍລິການ ຫຼື ເຫດການ. ເຈ້ຍໂຄສະນາມັກມີເປົ້າໝາຍເພື່ອແຈ້ງໃຫ້ເຖິງສ່ວນຫຼຸດ ຫຼື ການຫຼຸດລາຄາ. ເຈ້ຍໂຄສະນາບາງໃບປະກອບມີຄູປອງ.

ເຈົ້າສາມາດສົນທະນາຄຳຖາມດັ່ງຕໍ່ໄປນີ້ກັບລູກທີ່ເປັນເດັກນ້ອຍ ຫຼື ລູກທີ່ເປັນໄວໜຸ່ມຂອງເຈົ້າເປັນພາສາອັງກິດ ຫຼື ເປັນພາສາແມ່ຂອງເຈົ້າ:

- *Do we have junk mail in our native country? How is it similar to or different from junk mail in the United States?*
    - *(ພວກເຮົາມີໄປສະນີຂີ້ເຫຍື້ອໃນປະເທດບ້ານເກີດຂອງພວກເຮົາບໍ? ມັນຄືກັນ ຫຼື ແຕກຕ່າງແນວໃດຈາກໄປສະນີຂີ້ເຫຍື້ອໃນສະຫະລັດອາເມຣິກາ)*
- *Do we use coupons? What do we usually buy with coupons?*
    - *(ພວກເຮົາໃຊ້ຄູປອງບໍ? ພວກເຮົາມັກຊື້ຫຍັງດ້ວຍຄູປອງ?)*
- *Did we recently receive an advertisement in the mail? What kind of information did it have on it?*
    - *ວ່າງບໍ່ດົນມານີ້ ພວກເຮົາໄດ້ຮັບເຈ້ຍໂຄສະນາໃນໄປສະນີບໍ? ມັນມີຂໍ້ມູນປະເພດໃດໃນເຈ້ຍໂຄສະນາດັ່ງກ່າວ?)*

ເຈົ້າອາດເລືອກທີ່ຈະກັບຄືນມາເບິ່ງຄຳຖາມບາງຂໍ້ ຫຼື ທັງໝົດກັບລູກທີ່ເປັນເດັກນ້ອຍ ແລະ ລູກທີ່ເປັນໄວໜຸ່ມຂອງເຈົ້າ ໃນຂະນະທີ່ເຈົ້າພົບໄປສະນີຂີ້ເຫຍື້ອເພີ່ມຂຶ້ນ.

## ສ້າງທັກສະຮ່ວມກັນ: ກິດຈະກຳທີ່ໃຊ້ໄປສະນີຂີ້ເຫຍື້ອເພື່ອຝຶກພາສາອັງກິດ

ກິດຈະກຳຂ້າງລຸ່ມເປັນພຽງສອງສາມວິທີທີ່ເຈົ້າສາມາດໃຊ້ໄປສະນີຂີ້ເຫຍື້ອ ເຊັ່ນ: ຄູປອງ ແລະ ເຈ້ຍໂຄສະນາ ເພື່ອຝຶກພາສາອັງກິດກັບລູກທີ່ເປັນເດັກນ້ອຍ ແລະ ລູກທີ່ເປັນໄວໜຸ່ມຂອງເຈົ້າ.

## ສ້າງວັດຈະນານຸກົມຮູບພາບ

ເຈົ້າສາມາດຮວບຮວມຄູປອງ ແລະ ເຈ້ຍໂຄສະນາຫຼາຍໃບ. ເພື່ອສ້າງວັດຈະນານຸກົມຮູບພາບ, ໃຫ້ຈັດພວກມັນຕາມຕົວອັກສອນໃນໜັງສືຕິດຮູບ. ໃນຂະນະທີ່ເຈົ້າຈັດລຽງ, ຊີ້ໄປທີ່ຄູປອງ ແລະ ເຈ້ຍໂຄສະນາ ແລະ ໃຫ້ລູກທີ່ເປັນເດັກນ້ອຍ ຫຼື ລູກທີ່ເປັນໄວໜຸ່ມຂອງເຈົ້າລະບຸຜະລິດຕະພັນດັ່ງກ່າວເປັນພາສາອັງກິດ. ແລ້ວໃຫ້ລູກທີ່ເປັນເດັກນ້ອຍ ຫຼື ລູກທີ່ເປັນໄວໜຸ່ມຂອງເຈົ້າຊີ້ໄປທີ່ຄູປອງເພື່ອໃຫ້ເຈົ້າລະບຸ ເພື່ອວ່າເຈົ້າຈະສາມາດຝຶກຄຳສັບເຊັ່ນກັນ. ຫຼັງຈາກທີ່ເຈົ້າໄດ້ສ້າງວັດຈະນານຸກົມຮູບພາບຂອງເຈົ້າ, ເຈົ້າສາມາດໃຊ້ມັນເພື່ອຝຶກທັກສະອື່ນໆສຳລັບພາສາອັງກິດ ເຊັ່ນ: ຫຼັກໄວຍະກອນ ແລະ ການອອກສຽງ.

## ຝຶກຫຼັກໄວຍະກອນ: ຄຳນາມທີ່ສາມາດນັບໄດ້ ແລະ ຄຳນາມທີ່ບໍ່ສາມາດນັບໄດ້

ພ້ອມກັບລູກທີ່ເປັນເດັກນ້ອຍ ຫຼື ລູກທີ່ເປັນໄວໜຸ່ມຂອງເຈົ້າ, ໃຫ້ລະບຸຜະລິດຕະພັນທີ່ມີຄູປອງເຊິ່ງເປັນ countable noun (ຄຳນາມທີ່ສາມາດນັບໄດ້) ແລະ uncountable noun (ຄຳນາມທີ່ບໍ່ສາມາດນັບໄດ້). ຕົວຢ່າງເຊັ່ນ: egg (ໄຂ່) ແມ່ນຄຳນາມທີ່ສາມາດນັບໄດ້ ເພາະເຈົ້າສາມາດນັບແຕ່ລະໜ່ວຍໄດ້. ອີກຢ່າງ, ໂດຍປົກກະແລ້ວ ພວກມັນຍັງຖືກຂາຍເປັນແພັກເຊິ່ງມີຈຳນວນທີ່ສະເພາະ ເຊັ່ນ: 12

(ຍັງເປັນທີ່ຮູ້ຈັກຄື dozen (ໂຫຼ)). ໃນທາງກົງກັນຂ້າມ, cereal (ຊີຣຽວ) ແມ່ນຄຳນາມທີ່ບໍ່ສາມາດນັບໄດ້ ເພາະມັນຍາກ ຫຼື ເປັນໄປບໍ່ໄດ້ທີ່ຈະນັບແຕ່ລະກ້ອນ ຫຼື ເສດສ່ວນຂອງ cereal (ຊີຣຽວ). ແລ້ວແທນທີ່ຈະຂາຍເປັນຈຳນວນທີ່ເຈົ້າສາມາດນັບດ້ວຍມື, cereal (ຊີຣຽວ) ແມ່ນຖືກຂາຍໃນຈຳນວນທີ່ວັດແທກແລ້ວ ເຊັ່ນ: cereal (ຊີຣຽວ) ກ່ອງ 12 ອອນ. ຕໍ່ໄປ, ໃຫ້ໃຊ້ຄູປອງເພື່ອສ້າງລາຍການຊື້ເຄື່ອງ. ພ້ອມກັບລູກຂອງເຈົ້າ, ໃຫ້ອ້ອມວົງມົນເອົາຄຳນາມທີ່ສາມາດນັບໄດ້: apples (ໝາກແອັບເປິ້ນ), bananas (ໝາກກ້ວຍ), paper towels (ຜ້າເຈ້ຍ) ແລະ ອື່ນໆ. ແຕ້ມກ່ອງອ້ອມຄຳນາມທີ່ບໍ່ສາມາດນັບໄດ້: milk (ນ້ຳນົມ), bread (ເຂົ້າຈີ່), detergent (ສະບູຝຸ່ນ).

**ຝຶກເພີ່ມ:** ພ້ອມກັບລູກທີ່ເປັນເດັກນ້ອຍ ຫຼື ລູກທີ່ເປັນໄວໜຸ່ມຂອງເຈົ້າ, ໃຫ້ຈັດສິ່ງຂອງທີ່ຢູ່ໃນລາຍການຊື້ເຄື່ອງອອກເປັນປະເພດຕ່າງໆທີ່ມີສະຫຼາກກຳກັບ ເຊັ່ນ: “produce (ພືດຜັກ)”, “household cleaners (ອຸປະກອນທຳຄວາມສະອາດໃນຄົວເຮືອນ)” ແລະ “dairy (ຜະລິດຕະພັນນົມ).” ຕົວຢ່າງເຊັ່ນ: milk (ນ້ຳນົມ) ແລະ cheese (ຊີສ) ແມ່ນປະເພດຂອງຜະລິດຕະພັນນົມ. ຂຽນຄຳວ່າ “dairy (ຜະລິດຕະພັນນົມ)” ໃສ່ລາຍການຂອງເຈົ້າ ແລະ ຂີດກ້ອງມັນໄວ້. ແລ້ວຂຽນ “milk (ນ້ຳນົມ)” ແລະ “cheese (ຊີສ)” ຢູ່ຂ້າງລຸ່ມມັນ. ຖາມລູກທີ່ເປັນໄວໜຸ່ມ ຫຼື ລູກທີ່ເປັນເດັກນ້ອຍຂອງເຈົ້າວ່າ:

*What are some other dairy products?*
*(ແມ່ນຫຍັງຄືຜະລິດຕະພັນອື່ນໆທີ່ເຮັດມາຈາກນົມ?)*

## ຝຶກການອອກສຽງ: ພະຍັນຊະນະລົງທ້າຍ (s)

ພ້ອມກັບລູກທີ່ເປັນເດັກນ້ອຍ ຫຼື ລູກທີ່ເປັນໄວໜຸ່ມຂອງເຈົ້າ, ໃຫ້ລະບຸຜະລິດຕະພັນໃນຄູປອງທີ່ລົງທ້າຍດ້ວຍຕົວອັກສອນ “s,” ເຊັ່ນ: “eggs (ໄຂ່),” “cupcakes (ຄັບເຄັກ),” “paper towels (ຜ້າເຈ້ຍ)” ແລະ “bananas (ໝາກກ້ວຍ)”. ຕົວອັກສອນ “s” ແມ່ນຖືກໃຊ້ເພື່ອເຮັດໃຫ້ສິ່ງຂອງກາຍເປັນຈຳນວນຫຼາຍ. ໃຫ້ອະທິບາຍວ່າ ເມື່ອຄຳສັບໃດໜຶ່ງລົງທ້າຍດ້ວຍສະຫຼະ ຫຼື ຕົວອັກສອນອື່ນໆທີ່ມີສຽງຂອງພະຍັນຊະນະ ເຊັ່ນ: “m”, “n”, “ng”, “l”, “b”, “d”, “g”, “v”, “r” ຫຼື ອອກສຽງ “th”, ຕົວອັກສອນ “s” ແມ່ນເພີ່ມໃສ່ເພື່ອສ້າງຄຳສັບທີ່ມີຈຳນວນຫຼາຍ ແລະ ມີສຽງ /z/. ເວົ້າຄຳວ່າ “eggs (ໄຂ່)” ໂດຍເນັ້ນສຽງ /z/ ທີ່ຢູ່ທ້າຍຄຳສັບ.

ແລ້ວອະທິບາຍວ່າ ເມື່ອຄຳສັບໃດໜຶ່ງລົງທ້າຍດ້ວຍຕົວອັກສອນທີ່ບໍ່ອອກສຽງ ເຊັ່ນ: “p”, “t”, “k”, “f” ຫຼື “th” ທີ່ບໍ່ອອກສຽງ, ຕົວອັກສອນ “s” ຈະມີສຽງ /s/. ເວົ້າຄຳວ່າ “cupcakes (ຄັບເຄັກ)” ໂດຍເນັ້ນສຽງ /s/.

ຕັດສິນຮ່ວມກັນວ່າ ຄູປອງແຕ່ລະໃບທີ່ລົງທ້າຍດ້ວຍພະຍັນຊະນະ “s” ຄວນຖືກອອກສຽງເປັນສຽງ /z/ ຫຼື /s/.

## ຝຶກທັກສະການເວົ້າ: ຖາມ ແລະ ຕອບຄຳຖາມ (How Much (ຫຼາຍເທົ່າໃດ)?)

ພ້ອມກັບລູກທີ່ເປັນເດັກນ້ອຍ ຫຼື ລູກທີ່ເປັນໄວໜຸ່ມຂອງເຈົ້າ, ໃຫ້ສວມບົດບາດເປັນລູກຄ້າ ແລະ ພະນັກງານເກັບເງິນ. ໃຊ້ໂຄງສ້າງປະໂຫຍກຂ້າງລຸ່ມນີ້ເພື່ອຝຶກຖາມ ແລະ ຕອບຄຳຖາມກ່ຽວກັບຄູປອງຈາກວັດຈະນານຸກົມຮູບພາບຂອງເຈົ້າ. ແລ້ວປ່ຽນບົດບາດກັນ.

## ໂຄງສ້າງປະໂຫຍກເພື່ອຝຶກເວົ້າພາສາອັງກິດ

| | | | |
|---|---|---|---|
| **ຄຳຖາມ:** | How much can I save on ___________ with this coupon? (ຂ້ອຍຈະສາມາດປະຢັດເງິນໄດ້ຫຼາຍເທົ່າໃດສຳລັບ ___________ ດ້ວຍຄູປອງນີ້?) | **ຕົວຢ່າງ:** | *How much can I save on **bananas** with this coupon? (ຂ້ອຍຈະສາມາດປະຢັດເງິນໄດ້ຫຼາຍເທົ່າໃດສຳລັບ**ໝາກກ້ວຍ**ດ້ວຍຄູປອງນີ້?)*<br><br>*How much can I save on **cereal** with this coupon? (ຂ້ອຍຈະສາມາດປະຢັດເງິນໄດ້ຫຼາຍເທົ່າໃດສຳລັບ**ຊີຣຽວ**ດ້ວຍຄູປອງນີ້?)* |
| **ຄຳຕອບ:** | You can save _______. (ເຈົ້າສາມາດປະຢັດ _______.)( | **ຕົວຢ່າງ:** | *You can save **39 cents**. (ເຈົ້າສາມາດປະຢັດ **39 ເຊນ**.)*<br>*You can save **12 dollars**. (ເຈົ້າສາມາດປະຢັດ **12 ໂດລາ**.)* |

ໂຄງສ້າງປະໂຫຍກເຫຼົ່ານີ້ຈະເຮັດໃຫ້ເຈົ້າ ແລະ ລູກທີ່ເປັນເດັກນ້ອຍ ຫຼື ລູກທີ່ເປັນໄວໜຸ່ມຂອງເຈົ້າສາມາດຝຶກຄຳນາມທີ່ສາມາດນັບໄດ້ ແລະ ຄຳນາມທີ່ບໍ່ສາມາດນັບໄດ້ (ເບິ່ງ ຝຶກຫຼັກໄວຍະກອນ: ຄຳນາມທີ່ສາມາດນັບໄດ້ ແລະ ຄຳນາມທີ່ບໍ່ສາມາດນັບໄດ້ ຢູ່ຂ້າງເທິງ). ໃນຂະນະທີ່ເຈົ້າຝຶກ, ໃຫ້ຈື່ວ່າຄຳນາມທີ່ສາມາດນັບໄດ້ແມ່ນສາມາດລົງທ້າຍດ້ວຍຕົວອັກສອນ “s” ໃນຂະນະທີ່ຄຳນາມທີ່ບໍ່ສາມາດນັບໄດ້ແມ່ນບໍ່ສາມາດລົງທ້າຍໄດ້. ຕົວຢ່າງເຊັ່ນ: ຄຳວ່າ “bananas (ໝາກກ້ວຍ)” ແມ່ນຄຳນາມທີ່ສາມາດນັບໄດ້ ໃນຂະນະທີ່ຄຳວ່າ “cereal (ຊີຣຽວ)” ແມ່ນຄຳນາມທີ່ບໍ່ສາມາດນັບໄດ້. ໂຄງສ້າງປະໂຫຍກເຫຼົ່ານີ້ຍັງຈະເຮັດໃຫ້ເຈົ້າ ແລະ ລູກທີ່ເປັນເດັກນ້ອຍ ຫຼື ລູກທີ່ເປັນໄວໜຸ່ມຂອງເຈົ້າສາມາດຝຶກການອອກສຽງພະຍັນຊະນະລົງທ້າຍ “s” (ເບິ່ງ ຝຶກການອອກສຽງ: ພະຍັນຊະນະລົງທ້າຍ (s) ຢູ່ຂ້າງເທິງ). ໃຫ້ຈື່ວ່າ ຄຳສັບທີ່ມີພະຍັນຊະນະລົງທ້າຍ “-s” ສາມາດລົງທ້າຍດ້ວຍສຽງ /s/ ຫຼື /z/.

ຕົວຢ່າງເຊັ່ນ: ຄຳວ່າ “cents (ເຊນສ໌)” ລົງທ້າຍດ້ວຍສຽງ /s/ ໃນຂະນະທີ່ຄຳວ່າ “dollars (ໂດລາສ໌)” ລົງທ້າຍດ້ວຍສຽງ /z/.

## ຝຶກບົດສົນທະນາພາສາອັງກິດ

ບອກລູກທີ່ເປັນເດັກນ້ອຍ ຫຼື ລູກທີ່ເປັນໄວໜຸ່ມຂອງເຈົ້າວ່າ ເຈົ້າຈະເດີນທາງໄປທ່ອງທ່ຽວໃນວັນຍຸດທ້າຍອາທິດ. ຕັດສິນໃຈຮ່ວມກັນວ່າພວກເຈົ້າຈະເດີນທາງໄປໃສ. ເວົ້າກັບພວກເຂົາວ່າ:

*We can only bring three things with us. What should we bring?*
*(ພວກເຮົາສາມາດນຳສາມສິ່ງໄປກັບພວກເຮົາເທົ່ານັ້ນ. ພວກເຮົາຈະນຳເອົາຫຍັງໄປ?)*

ພ້ອມກັບລູກທີ່ເປັນເດັກນ້ອຍ ຫຼື ລູກທີ່ເປັນໄວໜຸ່ມຂອງເຈົ້າ, ໃຫ້ກຳນົດສາມສິ່ງທີ່ມີພາບຢູ່ໃນວັດຈະນານຸກົມຄູບອງຂອງເຈົ້າທີ່ຈະມີປະໂຫຍດສຸດໃນການເດີນທາງໃນວັນຍຸດທ້າຍອາທິດຂອງເຈົ້າ. ແນ່ນອນ ເຈົ້າສາມາດພິຈາລະນາເງິນທີ່ສາມາດປະຢັດໄດ້ຈາກການຕັດສິນໃຈຂອງເຈົ້າ. ໃນຂະນະທີ່ເຈົ້າລົມກັບລູກທີ່ເປັນເດັກນ້ອຍ ຫຼື ລູກທີ່ເປັນໄວໜຸ່ມຂອງເຈົ້າ, ພະຍາຍາມໃຊ້ ແລະ ອອກສຽງຄຳນາມທີ່ສາມາດນັບໄດ້ ແລະ ຄຳນາມທີ່ບໍ່ສາມາດນັບໄດ້ຢ່າງຖືກຕ້ອງ.

**ໝາຍເຫດ:** ໃຫ້ຈື່ວ່າ ເມື່ອເຈົ້າຝຶກບົດສົນທະນາພາສາອັງກິດກັບລູກທີ່ເປັນເດັກນ້ອຍ ຫຼື ລູກທີ່ເປັນໄວໜຸ່ມຂອງເຈົ້າ, ມັນໂອເຄທີ່ເຈົ້າຈະໃຊ້ຄຳສັບ, ວະລີ ຫຼື ປະໂຫຍກໃນພາສາຫຼັກໃນເຮືອນຂອງເຈົ້າ ຖ້າເຈົ້າບໍ່ຮູ້ວິທີເວົ້າສິ່ງໃດສິ່ງໜຶ່ງເປັນພາສາອັງກິດ ຫຼື ຖ້າຄຳສັບ ຫຼື ແນວຄິດຕ້ອງການຄຳອະທິບາຍເພີ່ມ. ການປະກອບພາສາຫຼັກໃນເຮືອນເຂົ້ານຳສາມາດເປັນວິທີການທີ່ມີປະສິດທິພາບ ເພື່ອສຳເລັດໜ້າທີ່ ແລະ ສະໜັບສະໜູນການຮຽນຮູ້ເນື້ອຫາໃໝ່ໃນພາສາເປົ້າໝາຍ ຫຼື ພາສາໃໝ່ (Genesee & Lindholm-Leary, 2012). ເປົ້າໝາຍຂອງການຝຶກບົດສົນທະນາແມ່ນເພື່ອຊອກຫາໂອກາດໃຫ້ຫຼາຍເທົ່າທີ່ເຈົ້າສາມາດຫາໄດ້ເພື່ອນຳໃຊ້ພາສາອັງກິດ. ເຈົ້າອາດພົບວ່າຕົນເອງໃຊ້ພາສາອັງກິດຫຼາຍຂຶ້ນໃນແຕ່ລະຄັ້ງທີ່ເຈົ້າເວົ້າ.

ເມື່ອກຳລັງຮຽນຮູ້ພາສາໃໝ່ ແລະ ວັດທະນະທຳໃໝ່, ສິ່ງຕ່າງໆທີ່ເຈົ້າພົບໃນຊີວິດປະຈຳວັນ ສາມາດໃຫ້ໂອກາດການຮຽນຮູ້ໃໝ່ໆໄດ້. ໄປສະນີຂີ້ເຫຍື້ອແມ່ນວິທີໜຶ່ງໃນການຝຶກພາສາອັງກິດໂດຍບໍ່ເສຍຄ່າ ໂດຍມີເນື້ອຫາທີ່ເຈົ້າສາມາດຊອກຫາໄດ້ໂດຍທັນທີໃນກ່ອງໄປສະນີຂອງເຈົ້າເອງ.

ສຳລັບການຝຶກເພີ່ມເຕີມ, ໃຫ້ລອງເຮັດໜຶ່ງໃນ ກິດຈະກຳສຳລັບໄປສະນີຂີ້ເຫຍື້ອໃນຫ້ອງຮຽນ ESL/EFL ຈາກເວບໄຊ *The Internet TESL Journal (ບົດບັນທຶກ TESL ໃນອິນເຕີເນັດ).*

## ແຫຼ່ງອ້າງອີງ

Genesee, F., & Lindholm-Leary, K. (2012). The education of English language learners (ການສຶກສາຂອງຜູ້ຮຽນຮູ້ພາສາອັງກິດ). In K. R. Harris, S. Graham, T. Urdan, A. G. Bus, S. Major, & H. L. Swanson (Eds.), *APA handbooks in psychology®. APA educational psychology handbook, Vol. 3. Application to learning and teaching (ຄູ່ມື APA ໃນ ຈິດຕະວິທະຍາ®. ຄູ່ມືຈິດຕະວິທະຍາການສຶກສາຂອງ APA, ຊຸດທີ 3. ການປະຕິບັດເພື່ອຮຽນຮູ້ ແລະ ການສັ່ງສອນ)* (ໜ້າທີ 499–526). American Psychological Association (ສະມາຄົມ ຈິດຕະວິທະຍາແຫ່ງອາເມຣິກາ). https://doi.org/10.1037/13275-020

Vygotsky, L.S. (1978). *Mind in society: The development of higher psychological processes (ຄວາມຄິດໃນສັງຄົມ: ການພັດທະນາຂະບວນການທາງຈິດຕະວິທະຍາຂັ້ນສູງ)*. (M. Cole, V. John-Steiner, S. Scribner, & E. Souberman, Eds.). Harvard University Press (ສື່ຂ່າວສານຂອງມະຫາວິທະຍາໄລຮາເວີດ).

Xu, Hong. (1999) Young Chinese ESL children’s home literacy experiences (ໄວໜຸ່ມຈີນ ປະສົບການໆປາກເວົ້າໃນເຮືອນຂອງເດັກນ້ອຍທີ່ຮຽນ ESL). *Reading Horizons: A Journal of Literacy and Language Arts (ຂອບເຂດຂອງການອ່ານ: ບົດບັນທຶກຂອງການປາກເວົ້າ ແລະ ສິນລະປະພາສາ)*, *40*, 47–64. https://scholarworks.wmich.edu/reading_horizons/vol40/iss1/3